ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ 03742 /ກພສ

ນະຄອນຫຼວງວຽງຈັນ, ວັນທີ 13 JUL 2018

# ແຈ້ງການ

ເຖິງ: ຫົວໜ້າ ພະແນກອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີ, ກອງກວດກາພາສີປະຈຳແຂວງ, ດ່ານພາສີຊາຍແດນໃນຂອບເຂດທົ່ວປະເທດ.

ເລື່ອງ: ການຄຸ້ມຄອງຂັ້ນຕອນການປະກອບເອກະສານການນຳເຂົ້າ, ຍົກເວັ້ນ, ງົດເກັບພາສີ ຫຼື ເສຍພາສີຫຼຸດຜ່ອນ ປະເພດນ້ຳມັນເຄື່ອງຕ່າງໆ, ການນຳເຂົ້າພາຫະນະຊົ່ວຄາວ ແລະ ການຕໍ່ວີຊາ (IM5) ຂອງ ບັນດາໂຄງການຕ່າງໆ, ສະຖານທູດ ແລະ ອົງການຈັດຕັ້ງສາກົນ.

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີ (ສະບັບປັບປຸງບາງມາດຕາ) ສະບັບເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014.
- ອີງຕາມ ຂໍ້ຕົກລົງກະຊວງການເງິນ ສະບັບເລກທີ 2826/ກງ, ລົງວັນທີ 22 ສິງຫາ 2018 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ.
- ອີງຕາມ ຄຳແນະນຳ ກົມພາສີ ສະບັບເລກທີ 02518/ກພສ, ລົງວັນທີ 21 ພຶດສະພາ 2018 ວ່າດ້ວຍການຄຸ້ມຄອງການນຳເຂົ້າວັດຖຸອຸປະກອນ, ກົນຈັກ, ພາຫະນະ, ນ້ຳມັນເຊື້ອໄຟ ແລະ ອື່ນໆ ທີ່ນຳເຂົ້າໃນລະບອບຍົກເວັ້ນ, ງົດເກັບພາສີ ຫຼື ເສຍພາສີຫຼຸດຜ່ອນ.

ເພື່ອອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດວຽກງານ ພ້ອມທັງຮັບປະກັນໄດ້ຕໍ່ການຄຸ້ມຄອງຫັກລົບແຜນນຳເຂົ້າໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການ.

## ກົມພາສີ ແຈ້ງການແນະນຳ ດັ່ງນີ້:

1. ການນຳເຂົ້າປະເພດນ້ຳມັນເຄື່ອງຕ່າງໆ ພາຍຫຼັງທີ່ຖືກຮັບຮອງແຜນນຳເຂົ້າ (Master list), ກ່ອນການນຳເຂົ້າ ຕ້ອງມີອະນຸຍາດນຳເຂົ້າຂອງຂະແໜງອຸດສາຫະກຳ ແລະ ການຄ້າ, ໃຫ້ພະແນກຄຸ້ມຄອງການຍົກເວັ້ນ ແລະ ງົດເກັບພາສີ ແນະນຳປະກອບເອກະສານ, ກວດກາຄວາມຖືກຕ້ອງ, ປ້ອນຂໍ້ມູນ ແລະ ອອກໃບຢັ້ງຢືນການບັນທຶກຂໍ້ມູນລົງໃນລະບົບຄຸ້ມຄອງແຜນ, ນຳສະເໜີ ກົມພາສີອະນຸມັດຫຼັກການລວມ (ໃບຕິດຕາມການຍົກເວັ້ນພາສີ-ອາກອນຂາເຂົ້າ) ຕາມອະນຸຍາດນຳເຂົ້າທີ່ມີອາຍຸການນຳໃຊ້ຂອງຂະແໜງອຸດສາຫະກຳ ແລະ ການຄ້າ, ຈາກນັ້ນມອບໃຫ້ພະແນກເຊັນສະໂນດ ນຳສົ່ງໃຫ້ດ່ານບ່ອນນຳເຂົ້າເພື່ອກວດກາ, ຄຸ້ມຄອງ ຫັກລົບແຜນ ແລະ ປະຕິບັດຕາມລະບຽບການແຈ້ງພາສີ.
2. ການນຳເຂົ້າພາຫະນະຊົ່ວຄາວແມ່ນໃຫ້ກວດກາໃສ່ແຜນນຳເຂົ້າທີ່ຖືກຮັບຮອງ, ຕ້ອງມີອະນຸຍາດນຳເຂົ້າຂອງຂະແໜງການກ່ຽວຂ້ອງ: ອະນຸຍາດນຳເຂົ້າຂອງຂະແໜງອຸດສາຫະກຳ ແລະ ການຄ້າ, ອະນຸຍາດທາງດ້ານເຕັກນິກ ຫຼື ອື່ນໆ, ໃຫ້ພະແນກກວດກາຄວາມຖືກຕ້ອງ, ປ້ອນຂໍ້ມູນ ແລະ ອອກໃບຢັ້ງຢືນການ

ບັນທຶກຂໍ້ມູນເຂົ້າໃນລະບົບຄຸ້ມຄອງແຜນ, ນໍາສະເໜີ ກົມພາສີອະນຸມັດ ສັນຍາຄໍ້າປະກັນການນໍາເຂົ້າຊົ່ວຄາວ, ຈາກນັ້ນມອບໃຫ້ພະແນກເຊັນສະໂນດນໍາສົ່ງໃຫ້ດ່ານບ່ອນນໍາເຂົ້າເພື່ອກວດກາ, ຄຸ້ມຄອງຫັກລົບແຜນ ແລະ ດໍາເນີນການແຈ້ງພາສີເປັນລາຍລະອຽດ (IM5) ຕາມລະບຽບການ.

2.1. ສໍາລັບການຂໍອະນຸຍາດຕໍ່ວີຊາ ແມ່ນໃຫ້ນໍາເອົາເອກະສານປະກອບການນໍາເຂົ້າທີ່ໄດ້ຮັບວີຊາເບື້ອງຕົ້ນ (IM5), ສະເໜີຕໍ່ກົມພາສີ ເພື່ອອະນຸມັດຕໍ່ວີຊາໃສ່ດ້ານຫຼັງຂອງໃບແຈ້ງພາສີເປັນລາຍລະອຽດ.

2.2. ໃນກໍລະນີທີ່ເອກະສານປະກອບການນໍາເຂົ້າ (IM5) ຕົ້ນສະບັບບໍ່ຄົບ ຫຼື ມີຂໍ້ມູນບໍ່ຊັດເຈນ, ຕ້ອງກວດກາລົດຕົວຈິງພ້ອມທັງບັນທຶກຂໍ້ມູນຂອງລົດ, ກວດກາຂໍ້ມູນໃສ່ລະບົບການແຈ້ງພາສີແບບເອເລັກໂຕຣນິກ (ASYCUDA), ພິມໃບແຈ້ງພາສີເປັນລາຍລະອຽດອອກຈາກລະບົບຢັ້ງຢືນສໍາເນົາຖືກຕ້ອງພ້ອມວີຊາໃສ່ໃບແຈ້ງພາສີດັ່ງກ່າວ.

3. ໃນການຈັດຕັ້ງປະຕິບັດຫາກພົບຄວາມຫຍຸ້ງຍາກໃຫ້ລາຍງານກົມພາສີ ເພື່ອມີວິທີແກ້ໄຂຕາມກົດໝາຍ ແລະ ລະບຽບການ

4. ແຈ້ງການ ສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮັກສາການຫົວໜ້າກົມພາສີ

ກະຊວງການເງິນ ກົມພາສີ

ບຸນປະເສີດ ສີກຸນລະບຸດ

<u>ບ່ອນສົ່ງ:</u>

- ພະແນກອ້ອມຂ້າງກົມພາສີ 01 ສະບັບ "ເພື່ອຕິດຕາມກວດກາ"
- ກອງຄຸ້ມຄອງພາສີ 01 ສະບັບ "ເພື່ອຕິດຕາມກວດກາ"
- ກອງກວດກາພາສີປະຈໍາແຂວງ 01 ສະບັບ "ເພື່ອຈັດຕັ້ງປະຕິບັດ"
- ດ່ານພາສີຊາຍແດນ 01 ສະບັບ "ເພື່ອຈັດຕັ້ງປະຕິບັດ"
- ເກັບມ້ຽນສໍາເນົາ 01 ສະບັບ.